ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນະຄອນຫຼວງວຽງຈັນ

ພະແນກເຕັກໂນໂລຊີ ແລະ ການສື່ສານ

ເລກທີ 445 /ພຕສ

ວັນທີ 26.6.2024

ຂາເຂົ້າ ສຳນັກງານອົງການປົກຄອງ ນວ
ໜ່ວຍງານບໍລິການປະຕູດຽວ
ເລກທີ: 3000
ວັນທີ: 3.7.2024

# ບົດລາຍງານ

**ຮຽນ:** ທ່ານ ເຈົ້າຄອງນະຄອນຫຼວງວຽງຈັນ ທີ່ເຄົາລົບ ແລະ ນັບຖືຢ່າງສູງ.

**ເລື່ອງ:** ລາຍງານການແກ້ໄຂຄຳສະເໜີຂອງນາງ ນາລິນທອນ ພິມຍາພັນ ກ່ຽວກັບ ຜົນກະທົບຈາກການປຸກສ້າງເສົາຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຂອງບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ຢູ່ບ້ານທົ່ງກາງ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ.

- ອີງຕາມ ຂໍ້ຕົກລົງ ຂອງເຈົ້າຄອງນະຄອນຫຼວງວຽງຈັນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ສະບັບເລກທີ 146/ຈນວ, ລົງວັນທີ 03 ກຸມພາ 2023;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີວ່າການ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ວ່າດ້ວຍການຕິດຕັ້ງສະຖານີຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ສະບັບເລກທີ 209/ປທສ, ລົງວັນທີ 05 ກຸມພາ 2016;
- ອີງຕາມ ໃບສະເໜີ ຂອງນາງ ນາລິນທອນ ພິມຍາພັນ ລົງວັນທີ 26 ກຸມພາ 2024.

ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ຂໍຖືເປັນກຽດຮຽນລາຍງານມາຍັງ ທ່ານເຈົ້າຄອງນະຄອນຫລວງວຽງຈັນ ເລື່ອງການແກ້ໄຂຄຳສະເໜີຂອງ ທ່ານ ນາງ ນາລິນທອນ ພິມຍາພັນ ກ່ຽວກັບ ຜົນກະທົບຈາກການຕິດຕັ້ງເສົາຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຂອງບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ຢູ່ບ້ານທົ່ງກາງ, ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ລະອຽດມີດັ່ງນີ້:

1. ໃນວັນທີ 26 ກຸມພາ 2024 ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ໄດ້ຮັບຄຳສະເໜີ ຈາກ ນາງ ນາລິນທອນ ພິມຍາພັນ, ປະຈຸບັນຢູ່ບ້ານທົ່ງກາງ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ໄດ້ສະເໜີໃຫ້ແກ້ໄຂບັນຫາ ການປຸກສ້າງເສົາຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຂອງບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ທີ່ມາຕັ້ງຢູ່ດິນໃກ້ກັບເຮືອນຂອງຕົນເອງໂດຍອ້າງວ່າ (ສັງລວມຄຳເຫັນສະເໜີທັງໝົດ):
   1). ການປຸກສ້າງເສົາຮັບ-ສົ່ງສັນຍານໂທລະສັບເຄື່ອນທີ່ ຂອງບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ບໍ່ຖືກຕ້ອງຕາມລະບຽບການ ແລະ ຂັດກັບຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 209/ປທສ.
   2). ການປຸກສ້າງບໍ່ຖືກຕ້ອງຕາມການອະນຸຍາດເຊັ່ນ: ຂໍອະນຸຍາດປຸກສ້າງເປັນເສົາໂມໂນ ແຕ່ປຸກສ້າງຕົວຈິງແມ່ນເປັນເສົາຊະນິດອື່ນ.
   3). ຕົນບໍ່ເຫັນດີໃຫ້ປຸກສ້າງເສົາຢູ່ຈຸດດັ່ງກ່າວ ຍ້ອນວ່າຢູ່ຈຸດທີ່ມີຊຸມຊົນ ແລະ ຢູ່ໃກ້ເຮືອນຕົນເອງ ຢ້ານມີຜົນກະທົບຈາກຄື້ນຄວາມຖີ່ຕໍ່ກັບສຸຂະພາບຂອງຄົນຢູ່ໃກ້ຄຽງ.
2. ລາຍງານກ່ຽວກັບການໄກ່ເກ່ຍແກ້ໄຂຜ່ານມາມີຄື:

ໃນເມື່ອພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ໄດ້ຮັບໃບສະເໜີຂອງທ່ານ ນາງ ນາລິນທອນ ພິມຍາພັນແລ້ວ, ກໍ່ໄດ້ສົມທົບກັບກະຊວງເຕັກໂນໂລຊີ ແລະ ການສື່ສານ ແຕ່ງຕັ້ງພະນັກງານລົງໄປກວດກາ

ເບິ່ງຕົວຈິງຕາມການສະເໜີຂອງຜູ້ກ່ຽວ ພົບເຫັນວ່າ ແມ່ນເສົາຮັບ-ສົ່ງສັນຍານຂອງບໍລິສັດລາວໂທລະຄົມມະນາຄົມ ມະຫາຊົນແທ້ ຊຶ່ງທາງບໍລິສັດໄດ້ຕັ້ງຢູ່ໃນຕອນດິນຂອງທ່ານ ນາງ ອ້ອຍ ທຳມະວົງສາ (ຕາມໃບສັນຍາວ່າດ້ວຍການເຊົ່າທີ່ດິນ ສະບັບເລກທີ 0119/ລລທ, ລົງວັນທີ 15 ກຸມພາ 2014), ຈຸດທີ່ຕັ້ງເສົານັ້ນຫ່າງຈາກເຮືອນຂອງ ນາງ ນາລິນທອນ ພົມຍາພັນປະມານ ແມັດ (ມີຫົນທາງຂັ້ນກາງລະຫວ່າງກາງ), ມີໃບອານຸຍາດປຸກສ້າງ ຈາກພະແນກການກ່ຽວຂ້ອງ ສະບັບເລກທີ 2440/ຍທຂ.ນວ, ລົງວັນທີ 11 ມີນາ 2024, ໂດຍຜ່ານການຢັ້ງຢືນຮັບຮູ້ຈາກອົງການປົກຄອງບ້ານ. ຈາກນັ້ນກໍ່ໄດ້ເຂົ້າຮ່ວມປຶກສາຫາລື ແລະ ໄກ່ເກ່ຍຮ່ວມກັນກັບພາກສ່ວນກ່ຽວຂ້ອງຫຼາຍຄັ້ງເຊັ່ນ:

- **ຄັ້ງທີ 1:** ໃນວັນທີ 11 ມີນາ 2024 ໄດ້ເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມລົງເບິ່ງສະຖານທີ່ຕົວຈິງ ປະກອບມີ: ສະພານະຄອນຫຼວງວຽງຈັນ, ຕາງໜ້າພະແນກ ຕສ ນະຄອນຫຼວງວຽງຈັນ, ຕາງໜ້າພະແນກ ຍທຂ ນະຄອນຫຼວງວຽງຈັນ, ນາຍບ້ານທົ່ງກາງ, ຄະນະວິຊາການບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ແລະ ທ່ານ ນາງ ນາລິນທອນ ພົມຍາພັນ ຜູ້ຮ້ອງຄວາມເປັນທຳ ເພື່ອໄກ່ເກ່ຍຮ່ວມກັນ **ຢູ່ຫ້ອງການບ້ານທົ່ງກາງ** (ມີບົດບັນທຶກຕິດຄັດ).
- **ຄັ້ງທີ 2**: ໃນວັນທີ 2 ເມສາ 2024 ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ, ໄດ້ເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມລົງເບິ່ງສະຖານທີ່ຕົວຈິງ ແລະ ເພື່ອປຶກສາຫາລືໄກ່ເກ່ຍຮ່ວມກັນອີກ ປະກອບມີ: ສະພານະຄອນຫຼວງວຽງຈັນ, ຕາງໜ້າພະແນກ ຕສ ນະຄອນຫຼວງວຽງຈັນ, ນາຍບ້ານທົ່ງກາງ, ຄະນະວິຊາການບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ສະຖານທີ່ແມ່ນຢູ່ຫ້ອງການບ້ານ, ແຕ່ໃນຄັ້ງນີ້ ນາງ ນາລິນທອນ ພົມຍາພັນບໍ່ໄດ້ເຂົ້າຮ່ວມນຳ (ບໍ່ໄດ້ເຮັດບົດບັນທຶກ).
- **ຄັ້ງທີ 3**: ໃນວັນທີ 22 ພຶດສະພາ 2024 ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ, ໄດ້ເປັນເຈົ້າພາບເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເພື່ອຊີ້ແຈງຕໍ່ຄຳສະເໜີຂອງທ່ານ ນາງ ນາລິນທອນ ພົມຍາພັນ ລວມມີ: ຕາງໜ້າອົງການຄັດສົມໂທລະຄົມມະນາຄົມ ກະຊວງ ຕສ, ຕາງໜ້າກົມຄື້ນຄວາມຖີ່ວິທະຍຸສື່ສານ ກະຊວງ ຕສ, ຕາງໜ້າພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ, ຫົວໜ້າຫ້ອງວ່າການເມືອງສີສັດຕະນາກ, ນາຍບ້ານທົ່ງກາງ, ຄະນະວິຊາການບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ແລະ ທ່ານນາງ ນາລິນທອນ ພົມຍາພັນ ຜູ້ຮ້ອງຄວາມເປັນທຳ (ມີບົດບັນທຶກຕິດຄັດ).
- **ຄັ້ງທີ 4**: ໃນວັນທີ 29 ພຶດສະພາ 2024 ພະແນກໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ໄດ້ເຊີນພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມເພື່ອຊີ້ແຈງຕໍ່ຄຳສະເໜີຂອງທ່ານ ນາງ ນາລິນທອນ ພົມຍາພັນ ລວມມີ: ຕາງໜ້າອົງການຄັດສົມໂທລະຄົມມະນາຄົມ ກະຊວງ ຕສ, ຕາງໜ້າກົມຄື້ນຄວາມຖີ່ວິທະຍຸສື່ສານ ກະຊວງ ຕສ, ຕາງໜ້າພະແນກ ຕສ ນະຄອນຫຼວງວຽງຈັນ, ຕາງໜ້າພະແນກສາທາລະນະສຸກ ນະຄອນຫຼວງວຽງຈັນ, ຕາງໜ້າຫ້ອງວ່າການປົກຄອງເມືອງສີສັດຕະນາກ, ນາຍບ້ານທົ່ງກາງ, ຄະນະວິຊາການບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ແລະ ທ່ານນາງ ນາລິນທອນ ພົມຍາພັນ ຜູ້ຮ້ອງຄວາມເປັນທຳ (ມີບົດບັນທຶກຕິດຄັດ).

3. ສັງລວມແລ້ວການໄກ່ເກ່ຍແຕ່ລະຄັ້ງໄດ້ປະຕິບັດດັ່ງນີ້: ໄດ້ຮັບຟັງຄຳສະເໜີຂອງ ນາງ ນາລິນທອນ ພົມຍາພັນ ທຸກຄຳສະເໜີ. ຈາກນັ້ນໄດ້ໃຫ້ແຕ່ລະພາກສ່ວນທີ່ກ່ຽວຂ້ອງກັບຄຳສະເໜີດັ່ງກ່າວ ອາທິບາຍຊີ້ແຈ້ງຢ່າງລະອຽດແລ້ວ ໂດຍມີເນື້ອໃນວ່າ:
   - ການອອກອານຸຍາດປຸກສ້າງຂອງຂະແໜງການໂຍທາທິການ ແລະ ຂົນສົ່ງ ນະຄອນຫຼວງວຽງຈັນ ແມ່ນບໍ່ໄດ້ຂັດກັບຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 209/ປທສ, ຊຶ່ງກໍ່ໄປຕາມຂັ້ນຕອນແລ້ວ, ພາຍຫຼັງປຸກສ້າງແລ້ວ ຈຶ່ງສາມາດຕິດຕັ້ງອຸປະກອນໂທລະຄົມໄດ້.
   - ຂະແໜງເຕັກໂນໂລຊີ ແລະ ການສື່ສານ ໄດ້ຊີ້ແຈ້ງທາງດ້ານເຕັກນິກຕໍ່ການກະຈາຍຄື້ນຄວາມຖີ່ຈາກອຸປະກອນຮັບ-ສົ່ງສັນຍານໂທລະຄົມ ຢູ່ຈຸດດັ່ງກ່າວແມ່ນຢູ່ໃນເກນມາດຕະຖານທີ່ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໄດ້ກຳນົດໄວ້ ແລະ ຈະບໍ່ມີຜົນກະທົບຕໍ່ສຸຂະພາບ ແລະ ສິ່ງແວດລ້ອມ ແລະ ພາຍຫຼັງຕິດຕັ້ງອຸປະກອນແລ້ວ ພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ຍັງຈະໄດ້ລົງໄປວັດແທກຄືນອີກພາຍຫຼັງເປີດນຳໃຊ້.

- ຂະແໜງສາທາລະນາສຸກ ກໍ່ໄດ້ຢືນຢັນວ່າໃນໄລຍະຜ່ານມາຍັງບໍ່ມີກໍລະນີໃດທີ່ໄດ້ຮັບຜົນກະທົບຈາກຄື້ນຄວາມຖີ່ດັ່ງກ່າວ.
- ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ເປັນຜູ້ປຸກສ້າງເສົາດັ່ງກ່າວ ແມ່ນການຂະຫຍາຍເຄືອຂ່າຍໄປຕາມແຜນການຂອງບໍລິສັດ ເປົ້າໝາຍເພື່ອເຮັດໃຫ້ການນຳໃຊ້ໃນຊຸມຊົນດັ່ງກ່າວມີຄວາມສະຖຽນ, ສະດວກ ແລະ ວ່ອງໄວ, ຢັ້ງຢືນວ່າການປຸກສ້າງເສົາ ແລະ ຕິດຕັ້ງອຸປະກອນໂທລະຄົມມະນາຄົມ ແມ່ນຈະປະຕິບັດຕາມລະບຽບການ ແລະ ຮັບປະກັນທາງດ້ານຄວາມປອດໄພ, ກໍລະນີຫາກເກີດບັນຫາຕາມມາ ກໍ່ຈະເປັນຜູ້ຮັບຜິດຊອບຕໍ່ຜົນກະທົບທຸກກໍລະນີທີ່ເກີດຂຶ້ນຈາກເສົາຮັບ-ສົ່ງສັນຍານດັ່ງກ່າວ.
- ດ້ວຍເຫດຜົນຂ້າງເທິງ ທາງອົງການປົກຄອງບ້ານ, ອົງການປົກຄອງເມືອງ ແລະ ບັນດາພາກສ່ວນກ່ຽວຂ້ອງໄດ້ເຫັນດີ ເປັນເອກະພາບ ໃຫ້ບໍລິສັດ ລາວໂທລະຄົມມະນາຄົມ ມະຫາຊົນ ສືບຕໍ່ປຸກສ້າງ.
- ຕາມທັດສະນະຂອງພະແນກເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ ແມ່ນເຫັນດີຕາມຄຳເຫັນຂອງບັນດາຂະແໜງການກ່ຽວຂ້ອງ, ກໍລະນີຫາກ ທ່ານ ນາງ ນາລິນທອນ ພົມຍາພັນ ຍັງບໍ່ເພິ່ງພໍໃຈກໍ່ສາມາດຮ້ອງຟ້ອງຕາມສິດທິຂອງຕົນ ຫຼື ຕາມຂະບວນການຍຸຕິທຳ.

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຊາບ ແລະ ຂໍຄຳເຫັນຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

ຮຽນມາດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ.

**ຫົວໜ້າພະແນກ**

ພະແນກ ເຕັກໂນໂລຊີ ແລະ ການສື່ສານ ນະຄອນຫຼວງວຽງຈັນ

ສີຄອນ ອ່ອນສີພັນລາ